# ເນື້ອໃນກ່ຽວກັບມູນເຊື້ອ
# ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ
# ພັກປະຊາຊົນປະຕິວັດລາວ
# ຄົບຮອບ 25 ປີ

**( 22/3/55 – 22/3/80 )**

ສຳນັກພິມຈຳໜ່າຍ ສ. ປ. ປ. ລ.

1980

# ເນື້ອໃນກ່ຽວກັບມູນເຊື້ອ

# ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ

# ພັກປະຊາຊົນປະຕິວັດລາວ

# ຄົບຮອບ 25 ປີ

**( 22/3/55 – 22/3/80 )**

# ຄຳຂວັນ: ໃນໂອກາດສະຫຼອງ

# ວັນປະຫວັດສາດ

ພິມທີ່ໂຮງພິມແຫ່ງຊາດ

1980

# ຄຳຂວັນໃນໂອກາດສະຫຼອງ

## 2 ວັນປະຫວັດສາດ

໑)- ຄຳນັບວັນສ້າງຕັ້ງພັກປະຊາຊົນ ປະຕິວັດ ລາວ ຄົບຮອບ ໒໕ ປີ!

໒)- ຄຳນັບວັນສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ຄົບຮອບ ໕ ປີ!

໓)- ອອກແຮງປັບປຸງພັນທະພາບ ກຳມະກອນ-ຊາວນາ, ເພີ້ມທະວີຄວາມສາມັກຄີປະຊາຊົນບັນດາຊົນຊາດ ແລະ ບັນດາຊົນຄົນ, ປົກປັກຮັກສາປະເທດຊາດ ແລະສ້າງສາສັງຄົມນິຍົມ.

໔)- ຕັ້ງໜ້າປັບປຸງອຳນາດການ ປົກ ຄອງ ປະ ຕິ ວັດ ເສີມຂະຫຍາຍສິດເປັນເຈົ້າລວມໝູ່ ຂອງປະຊາຊົນບັນດາຊົນຊາດ!

໕)- ອອກແຮງປັບປຸງ ແລະ ເພີ້ມທະວີກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ປະຊາຊົນ, ເດັດດ່ຽວທັບມ້າງທຸກກົນອຸບາຍ ຂອງພວກຈັກກະພັດ ແລະ ພວກປະຕິການສາກົນ!

໖)- ອອກແຮງເພີ່ມພູນພະລິດຜົນ, ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ. ຕັດສິນໃຈປະຕິບັດມະຕິຄັ້ງທີ ໗ ຂອງສູນກາງພັກໃຫ້ສຳເລັດຜົນ!

໗)- ຕັ້ງໜ້າຮ່ຳຮຽນ, ເຝິກຝົນຕົນເອງ ໃຫ້ເປັນຄົນໃຫມ່ ສັງຄົມນິຍົມ!

໘)- ເຊີດຊູນ້ຳໃຈຮັກຊາດ, ຮັກສັງຄົມນິຍົມ, ເຊີດຊູລັດທິວິລະຊົນປະຕິວັດ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ!

໙)- ເພີ່ມທະວີຄວາມສາມັກຄີພາຍໃນພັກ ໃຫ້ໜັກແໜ້ນທາງດ້ານການເມືອງ, ເຂັ້ມແຂງທາງດ້ານການຈັດຕັ້ງ ເພື່ອນຳພາທຸກຂົງເຂດວຽກງານ!

໑໐)- ຄວາມສາມັກຄີແບບພິເສດລະຫວ່າງປະຊາຊົນລາວ ກັບ ປະຊາຊົນຫວຽດນາມ, ປະຊາຊົນກຳປູເຈຍ ໝັ້ນຍືນ!

໑໑)- ຄວາມສາມັກຄີແບບສູ້ຣົບ ລະຫວ່າງ ປະຊາຊົນລາວ ກັບ ປະຊາຊົນໂຊວຽດ ຜູ້ຍິ່ງໃຫຍ່ ແລະ ບັນດາປະເທດສັງຄົມນິຍົມອ້າຍນ້ອງ ໝັ້ນຍືນ!

໑໒)- ເດັດດ່ຽວ ສະໜັບສະໜູນການຕໍ່ສູ້ ເພື່ອສັນຕິ

ພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ
ແລະ ສັງຄົມນິຍົມຂອງປະຊາຊົນທົ່ວໂລກ!

໑໓)– ສັນຕິພາບຂອງໂລກ ໝັ້ນຍືນ!

໑໔)– ລັດທິ ມາກ – ເລນິນ ທີ່ຊະນະເລີດ ໝັ້ນຍືນ!

໑໕)– ກອງທັບປົດປ່ອຍປະຊາຊົນລາວ ໝັ້ນຍືນ!

໑໖)– ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ໝັ້ນຍືນ!

໑໗)– ພັກປະຊາຊົນປະຕິວັດລາວ ຜູ້ຈັດຕັ້ງ ແລະ ນຳ
ພາທຸກໄຊຊະນະ ຂອງການປະຕິວັດລາວ
ໝັ້ນຍືນ!

24 / VII

ຫ້າມຈຳໜ່າຍ

## ເນື້ອໃນກ່ຽວກັບມູນເຊື້ອ ເພື່ອສະເຫລີມສະຫລອງ ວັນສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວຄົບຮອບ 25 ປີ (22/3/55–22/3/80).

ພາຍໃຕ້ການນຳພາ ອັນສະຫລາດ ສ່ອງໃສຂອງພັກປະຊາຊົນປະຕິວັດລາວ ເຊິ່ງແມ່ນພັກ ມາກ-ເລນິນອັນແທ້ຈິງ, ກອງນຳໜ້າຂອງຊົນຊັ້ນກຳມະກອນ ແລະເປັນຕົວແທນໃຫ້ປະຊາຊົນຜູ້ອອກແຮງງານບັນດາຊົນຊາດລາວ ປະຊາຊົນ ບັນດາຊົນຊາດລາວເຮົາ ໄດ້ຂຽນໃບໜ້າປະຫວັດສາດອັນສະຫວ່າງສະໄຫວໃຫ້ປະເທດຊາດ: ຈາກປະເທດເມືອງຂຶ້ນ, ເຄິ່ງສັກດີນາ, ປະເທດເຮົາໄດ້ກາຍເປັນປະເທດເອກະລາດ, ເອກະພາບ, ພາຊາດເຮົາແຕ່ຖານະເປັນຂ້ອຍຂ້າ ກ້າວຂຶ້ນ ເປັນເຈົ້າຕົນເອງຢ່າງແທ້ຈິງ; ແລະກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມທີ່ສະຫວ່າງສະໄຫວ.

**I.** ຕໍ່ສູ້ຍາວນານ-ໄຊຊະນະ ຍິ່ງໃຫຍ່-ມູນເຊື້ອສະ

ຫງ່າງາມ.

ຊາດເຮົາ ໄດ້ກຳເນີດ ແລະ ເຕີບໃຫຍ່ຂຶ້ນໃນພາກພື້ນອາຊີ ອາຄະເນ ອັນຮັ່ງມີ ແລະ ສວຍງາມນັບເປັນເວລາຫລາຍພັນປີມາແລ້ວ.

ປະຊາຊົນລາວມີມູນເຊື້ອຂະຫຍັນ ໝັ່ນພຽນ, ຫົວຄິດປະດິດສ້າງ ແລະ ພິລະອາດຫານ ເຄີຍໄດ້ຕໍ່ສູ້ກັບທຳມະຊາດ ແລະ ຕໍ່ສູ້ສັດຕູພາຍນອກຜູ້ຮຸກຮານ, ເພື່ອປົກປັກຮັກສາປະເທດຊາດ ບ້ານເມືອງ, ສ້າງວັດທະນາທຳ ອັນຮຸ່ງເຮືອງເຫລືອງເຫລື້ອມ ແລະນຳເອົາຄວາມອິ່ມໜຳສຳລານມາໃຫ້ຊາດລາວເປັນເວລາຫລາຍ ສັດຕະວັດມາແລ້ວ.

ທ້າຍສັດຕະວັດທີ 19 ປະເທດລາວເຮົາໄດ້ຖືກພວກລ່າເມືອງຂຶ້ນ ຝະລັ່ງເຂົ້າມາຮຸກຮານ ແລະ ປົກຄອງ. ແຕ່ປະຊາຊົນລາວ ບັນດາຊົນຊາດ ໄດ້ລຸກຮື້ຂຶ້ນ ຢ່າງອົງອາດກ້າຫານຕໍ່ສູ້ ຕ້ານກັບພວກລ່າເມືອງຂຶ້ນຝະລັ່ງຕະຫລອດ 50 ກວ່າປີຢ່າງລຽນຕິດ ເຊັ່ນ: ຂະບວນການຂອງພໍ່ກະດວດຂອງອົງແກ້ວ ກົມມະດຳ, ຂອງເຈົ້າຟ້າປັດໃຈ, ຂອງຄູອາຈານ, ພະສົງອົງເຈົ້າ ແລະ ຂອງປະຊາຊົນບັນດາຊົນຊາດຊົນເຜົ່າ, ແຕ່ເນື່ອງຈາກຂະບວນການດັ່ງກ່າວ ຍັງບໍ່ທັນມີແນວທາງການເມືອງ ອັນຖືກຕ້ອງ, ຍ້ອນແນວນັ້ນຈຶ່ງບໍ່

ສາມາດເຕົ້າໂຮມຄວາມສາມັກຄີອັນກ້ວາງຂວາງ.

ປີ ໑໙໑໗, ມະຫາປະຕິວັດສັງຄົມນິຍົມ ເດືອນຕຸລາ ຂອງລັດເຊຍ ສຳເລັດຜົນໄດ້ໄຂຍຸກສະໄໝໃໝ່ – ຍຸກສະໄໝຂອງການປະຕິວັດສັງຄົມນິຍົມ ນຳໂດຍຊົນຊັ້ນກຳມະຊີບ ພ້ອມກັນນັ້ນມັນໄດ້ຊີ້ບອກໃຫ້ບັນດາປະຊາຊາດ ແລະ ປະຊາຊົນທີ່ຖືກກົດຂີ່ໃນທົ່ວໂລກ ເຫັນແຈ້ງວ່າ ດຳເນີນການປະຕິວັດກຳມະຊີບ ແມ່ນເສັ້ນທາງດຽວເພື່ອປົດປ່ອຍປະເທດຊາດ ປົດປ່ອຍປະຊາຊົນ.

ໂດຍຊອກເຫັນສັດຈະທຳອັນຍິ່ງໃຫຍ່ ຈາກການປະຕິວັດເດືອນຕຸລາ ຂອງລັດເຊຍດັ່ງກ່າວ, ສະຫາຍຫງວຽນອາຍກວກ ເຊິ່ງແມ່ນປະທານໂຮຈິມິນ, ນັກຮົບຜູ້ດີເດັ່ນຂອງຂະບວນການກອມມູນິດສາກົນ ໄດ້ນຳເອົາລັດທິມາກ–ເລນິນ ເຂົ້າມາໃນອິນດູຈີນ ສົມທົບກັບຂະບວນການກຳມະກອນ ແລະ ຂະບວນຮັກຊາດອັນແທ້ຈິງໃນແຫລມອິນດູຈີນ, ສ້າງຕັ້ງພັກກອມມູນິດອິນດູຈີນຂຶ້ນໃນວັນທີ ໓/໒/໑໙໓໐ ອັນເປັນຜູ້ໃຫ້ກຳເນີດຂອງພັກປະຊາຊົນ ປະຕິວັດລາວໃນປະຈຸບັນ; ເປັນຂີດໝາຍອັນພື້ນຖານ ໃນປະຫວັດສາດຂອງການປະຕິວັດທັງສາມ ປະເທດອິນດູຈີນ.

ເລີ່ມແຕ່ໄດ້ສ້າງຕັ້ງຂຶ້ນ, ພັກກອມມູນິດອິນດູຈີນ ພາຍ

ໄດ້ການນຳພາຂອງ ສະຫາຍ ໂຮຈິມິນ ໄດ້ແກ້ໄຂບັນຫາ ຕ່າງໆ ກ່ຽວກັບຍຸດທະສາດ ແລະ ຍຸດໂທບາຍຂອງການ ປະຕິວັດອິນດູຈີນຢ່າງຖືກຕ້ອງ. ໃນໂຄງການ ການເມືອງ ຂອງພັກປີ ໑໙໓໐ ໄດ້ຢືນຢັນຢ່າງຈະແຈ້ງວ່າ: "ການປະ ຕິວັດອິນດູຈີນ ເປັນພາກສ່ວນໜຶ່ງ ທີ່ສະໜິດແໜ້ນກັບ ການປະຕິວັດໂລກ", ການປະຕິວັດອິນດູຈີນຕ້ອງຜ່ານສອງ ໄລຍະຄື: ໄລຍະການປະຕິວັດຊາດ ປະຊາທິປະໄຕ ອັນ ມີໜ້າທີ່ໂຄ່ນລົ້ມຈັກກະພັດ ແລະ ສັກດີນາ, ພາຍຫລັງ ທີ່ໄດ້ສຳເລັດບັນດາໜ້າທີ່ດັ່ງກ່າວແລ້ວ ຈະກ້າວຂຶ້ນເຮັດ ການປະຕິວັດ ສັງຄົມນິຍົມໂດຍກົງ ໂດຍບໍ່ຜ່ານໄລຍະຂະ ຫຍາຍຕົວຂອງ ທຶນນິຍົມ..."

ຍ້ອນມີແນວທາງອັນຖືກຕ້ອງ, ການຕໍ່ສູ້ປະຕິວັດຂອງ ປະຊາຊົນບັນດາຊົນຊາດລາວ ໄດ້ກ້າວເຂົ້າສູ່ໄລຍະໃໝ່ ດ້ວຍຄຸນນະພາບໃໝ່ ຈາກນັ້ນການປະຕິວັດລາວພາຍໃຕ້ ການນຳພາຂອງພັກໄດ້ຜ່ານໄລຍະທາງ ອັນລະອຽດລະອ້ຽວ ທໍລະຫົດ ອົດທົນ, ແຕ່ໄດ້ຮັບໄຊຊະນະສະຫງ່າງາມ.

໑)– ພັກໄດ້ນຳພາ ແລະ ປຸກລະດົມຂົນຂວາຍປວງຊົນ ລຸກຮືຂຶ້ນພາບດຽວ ຍາດອຳນາດການປົກຄອງ ທົ່ວປະເທດ ຢ່າງມີໄຊໃນປີ ໑໙໔໕.

ປີ ໑໙໔໕, ກອງທັບແດງ ສະຫະພາບໂຊວຽດ ໄດ້ຜາບແພ້ພວກຟາຊິດເຢຍລະມັນ, ອີຕາລີ ແລະ ຍີ່ປຸ່ນ ເຮັດໃຫ້ສົງຄາມໂລກຄັ້ງທີ ໒ ສິ້ນສຸດລົງ. ໄຊຊະນະອັນມະຫາສານຂອງສະຫະພາບໂຊວຽດ ແລະ ຂອງບັນດາການປະຕິວັດໂລກໄດ້ສົ່ງຜົນສະທ້ອນຢ່າງເລິກເຊິ່ງ ແລະ ຮອບດ້ານ ເຖິງຖານະການໂລກ.

ໂດຍກຳແໜ້ນກາລະໂອກາດ ແລະ ສະພະວະການປະຕິວັດ ທີ່ໄດ້ປາກົດຕົວຂຶ້ນມາ ໃນເດືອນສິງຫາປີ ໑໙໔໕, ພັກໄດ້ເດັດດ່ຽວ ນຳພາປະຊາຊົນອິນດູຈີນ ລຸກຮື້ຂຶ້ນ ຍຶດອຳນາດການປົກຄອງ ພ້ອມກັບພາບດຽວ ຈາກກຳມືຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ພວກຟາຊິດຍີ່ປຸ່ນ ໄດ້ຮັບໄຊຊະນະ ແລະ ປູ່ລາວພວກເຮົາ ກໍໄດ້ປະກາດຄວາມ ເປັນເອກະລາດຂອງຊາດ ເທື່ອທຳອິດ ໃນປະຫວັດສາດ ຂອງຊາດລາວ ຕໍ່ໂລກໃນວັນທີ ໑໒ ເດືອນຕຸລາ ໑໙໔໕. ອັນນັ້ນແມ່ນບາດລ້ຽວອັນມະຫັດສະຈັນ ໃນປະຫວັດສາດ ຂອງຊາດລາວເຮົາຜ່ານເວລາເກືອບ ໒໐໐ ປີແຫ່ງການຕໍ່ສູ້ເພື່ອປົດແອກແຫ່ງການເປັນຂ້ອຍຂ້າມ້າຕ່າງ ຂອງຊາດອື່ນ: ມັນໄດ້ຍົກສູງ ແລະ ເສີມຂະຫຍາຍ ມູນເຊື້ອຕໍ່ສູ້ ຂອງປະຊາຊົນ ບັນດາຊົນຊາດລາວເພື່ອຄວາມເປັນເອກະລາດ ແລະເອກະພາບຂອງຊາດ

ຢ່າງແທ້ຈິງ: ມັນໄດ້ໄຂສັງກາດໃໝ່–ສັງກາດແຫ່ງຄວາມເປັນເອກະລາດແລະອິດສະລະພາບ: ມັນໄດ້ໄຂໄລຍະໃໝ່ ໄລຍະ ທີ່ປະຊາຊົນ ບັນດາຊົນຊາດລາວ ໄດ້ທັບມ້າງຊີກໂສ້ເປັນຂ້ອຍຂ້າຂອງຊາດອື່ນ ແລະ ກ້າວຂຶ້ນຕໍ່ສູ້ປະຕິວັດດ້ວຍຄວາມຮູ້ສຶກຕື່ນຕົວ ເພື່ອປົກປັກຮັກສາ ແລະ ສະຖາປະນາປະເທດຊາດພາຍໃຕ້ການນຳພາຂອງຊົນຊັ້ນກຳມາຊົນ.

໖)– ການຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງໃນ ໙ ປີໄດ້ຮັບໄຊຊະນະ, ບຸດຕິແອກຄອບຄອງຂອງລັດທິລ່າເມືອງຂຶ້ນແບບເກົ່າຢູ່ໃນປະເທດເຮົາຢ່າງຕະຫລອດການ.

ເດືອນ·໓–໑໙໔໖, ໂດຍໄດ້ຮັບການຊ່ວຍເຫລືອຈາກຈັກກະພັດອັງກິດ ແລະ ອາເມລິກາ, ຈັກກະພັດຝະລັ່ງໄດ້ກັບຄືນມາຮຸກຮານປະເທດເຮົາຄືນໃໝ່ເປັນເທື່ອທີສອງ.

ໃນເວລານັ້ນ ພັກໄດ້ວາງແນວທາງ "ຕີຕ້ານທົ່ວປວງຊົນ, ຮອບດ້ານ, ຍາວນານ". ອີງໃສ່ແນວທາງນີ້. ປະຊາຊົນບັນດາຊົນຊາດຊົນເຜົ່າຢູ່ໃນລາວ ໄດ້ຮັບການປຸກລຸກຢ່າງກວ້າງຂວາງ ແລະ ແຂງແຮງ, ຂະບວນການຕໍ່ຕ້ານທົ່ວປວງຊົນ ນັບມື້ນັບຂະຫຍາຍຕົວ ຢ່າງຟົດເດືອດ, ລະນາຄົມຜູ້ກູ້ຊາດໄດ້ສ້າງຕັ້ງຂຶ້ນ, ພ້ອມກັບນັ້ນ ຖານທີ່ໝັ້ນຫລາຍແຫ່ງໄດ້ປະກົດຕົວ: ອຳນາດການປົກຄອງປະຕິວັດ

ແລະ ກຳລັງປະກອບອາວຸດປະຊາຊົນກໍໄດ້ສ້າງຕັ້ງຂຶ້ນ. ນັບ
ດາຣຸນການຂູດຮີດຂອງລະບອບສັກດີນາ ແລະ ກ່ອນສັກດີ
ນາ ຖືກລົບລ້າງເປັນກ້າວໆ ໒໐/໑/໑໙໔໙ ກອງທັບ
ລາວອິດສະລະ ໄດ້ສ້າງຕັ້ງຂຶ້ນ ເປັນທາງການ, ວັນທີ
໑໓/໘/໑໙໕໐, ກອງປະຊຸມໃຫຍ່ແນວໂຮມຕໍ່ຕ້ານທົ່ວປະ
ເທດ ໄດ້ປະກາດສ້າງຕັ້ງ ແນວລາວອິດສະລະ, ວາງໂຄງ
ການການເມືອງ ໑໒ ຂໍ້ອອກ ແລະ ສ້າງຕັ້ງລັດຖະບານ
ລາວຕໍ່ຕ້ານຂຶ້ນ. ນັບຕັ້ງແຕ່ນັ້ນເປັນຕົ້ນມາ, ການຕໍ່ຕ້ານ
ຂອງປະຊາຊົນເຮົາ ໄດ້ກ້າວຂຶ້ນ ໄລຍະຂະຫຍາຍຕົວໃໝ່.
ໂດຍປະສານສົມທົບ ແລະ ຮ່ວມມືກັບກອງທັບ ປະຕິວັດ
ແລະ ປະຊາຊົນຫວຽດນາມ ເຊິ່ງຢູ່ໃນສະໜາມຮົບອິນດູ
ຈີນ ອັນດຽວກັນ, ກອງທັບ ແລະ ປະຊາຊົນເຮົາໄດ້ດຳ
ເນີນການສູ້ຮົບຢ່າງອົງອາດກ້າຫານ, ປົດປ່ອຍຫລາຍເຂດ
ອັນກ້ວາງໃຫຍ່ຢູ່ພາກເໜືອ: ພາກກາງ ແລະ ພາກໄຕ້
ລາວ. ຍ້ອນຖືກປະລາໄຊຢ່າງໜັກໜ່ວງ ແລະ ຮອບດ້ານ
ຢູ່ທຸກສະໜາມຮົບໃນອິນດູຈີນ, ເປັນຕົ້ນແມ່ນການປະລາ
ໄຊອັນໜັກໜ່ວງເຈັບແສບ ແລະ ອັບອາຍຂາຍໜ້າຢູ່
ດຽນບຽນຟູ, ພວກລ່າຫົວເມືອງຂຶ້ນຝະລັ່ງ ຈຳຕ້ອງຍອມ
ເຊັນສັນຍາເຊີແນວ ປີ ໑໙໕໔ ກ່ຽວກັບອິນດູຈີນ, ຟື້ນຟູ

ສັງຄົມພາບປູ່ອົບດູຈີນ, ຮັບຮູ້ຄວາມເປັນເອກະລາດ ອຳນາດອະທິປະໄຕ, ເອກະພາບ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງລາວ, ຫວຽດນາມ ແລະ ກຳປູເຈຍ, ຮັບຮູ້ຖານະອັນຖືກຕ້ອງຕາມກົດໝາຍ ຂອງບັນດາກຳລັງ ປະຕິວັດລາວຢູ່ໃນເວທີສາກົນ.

ນີ້ ແມ່ນໄຊຊະນະອັນໃຫຍ່ຫລວງ ຂອງການປະຕິວັດລາວ, ມັນໄດ້ເສີມຂະຫຍາຍຈິດໃຈຊາດຂອງປະຊາຊົນເຮົາໃນທົ່ວປະເທດຂຶ້ນສູ່ລະດັບໃໝ່ ສູງກວ່າເກົ່າ ໄຊຊະນະດັ່ງກ່າວ ພ້ອມກັບໄຊຊະນະຂອງປະຊາຊົນຫວຽດນາມ ແລະ ກຳປູເຈຍ ໄດ້ບຸກທຳລາຍກອບກອງ ລັດທິລ່າເມືອງຂຶ້ນຝະລັ່ງ ເຊິ່ງໄດ້ແກ່ບາວເປັນເວລາເກືອບສັດຕະວັດໜຶ່ງໃນອິນດູຈີນຢ່າງຕະຫລອດການ, ໄຂ ໄລ ບະ ແຫ່ງ ການ ລົ້ມ ລະລາຍ ຂອງລັດທິລ່າເມືອງຂຶ້ນແບບເກົ່າ ໃນຂອບເຂດທົ່ວໂລກ.

ປ). ພັກປະຊາຊົນປະຕິວັດລາວ ໄດ້ສ້າງຕັ້ງຂຶ້ນໃນວັນທີ ໒໒/໓/໑໙໕໕, ໂດຍສືບທອດພາລະກິດອັນສະຫງ່າງາມຂອງພັກກອມມູນິດອິນດູຈີນ. ນຳພາທົ່ວປວງຊົນຕໍ່ສູ້ກູ້ຊາດ ຕ້ານອາເມລິກາຈົນເຖິງໄຊຊະນະສົມບູນ.

ຕໍ່ກັບສະພາບການ ແລະ ຄວາມຮຽກຮ້ອງຕ້ອງການ

ຂອງການຕໍ່ສູ້ໃນໄລຍະໃໝ່, ກໍຄືການເຕີບໃຫຍ່ຂອງການປະຕິວັດລາວ,ພັກປະຊາຊົນລາວ (ໃນປະຈຸບັນແມ່ນພັກປະຊາຊົນປະຕິວັດລາວ) ໄດ້ຮັບການສ້າງຕັ້ງຂຶ້ນໃນ ໒໒/໓/໑໙໕໕ ເພື່ອສືບທອດພາລະກິດອັນສະຫງ່າງາມຂອງພັກກອມມູນິດ ອິນດູຈີນ, ຫາບແບກພາລະໜ້າທີ່ ປະຫວັດສາດ ໃນການນໍາພາທົ່ວປວງຊົນລາວຕໍ່ສູ້ກູ້ຊາດ ຕ້ານອາມລິກາເຊິ່ງແມ່ນໄລຍະທີ່ຕໍ່ສູ້ທີ່ດຸເດືອດ, ຂ້ຽວຂາດ, ສັບສົນຂອງການປະຕິວັດລາວ ພ້ອມກັນນັ້ນກໍເປັນໄລຍະຕໍ່ສູ້ ທີ່ສະຫງ່າອົງອາດກ່ວາໝູ່ ແລະ ມີໄຊຍິ່ງໃຫຍ່ກ່ວາໝູ່ໃນປະຫວັດສາດຂອງຊາດເຮົາ.

ເມື່ອພວກລ່າເມືອງຂຶ້ນປະລັ່ງ ໄດ້ຖືກເສຍໄຊຢ່າງສິ້ນເຊີງແລ້ວ, ຈັກກະພັດອາເມລິກາ ໄດ້ກະໂດດເຂົ້າມາແທນທີ່, ຈາກນັ້ນຊາດລາວເຮົາ ໄດ້ປະເຊີນໜ້າກັບສັດຕູ ໂຕໃໝ່ ທີ່ໃຫຍ່ໂຕ, ຮ້າຍກາດ ແລະ ເລິກແລບກ່ວາເພິນໃນໝູ່ຈັກກະພັດນິຍົມທັງຫລາຍ, ພວກມັນດໍາເນີນສົງຄາມລ້າງຜານຕໍ່ປະເທດຊາດຂອງພວກເຮົາ ຢ່າງບໍ່ເຄີຍມີມາໃນປະຫວັດສາດຂອງຊາດລາວ.

ຕໍ່ໜ້າໄພອັນຕະລາຍ ຢ່າງໜັກໜ່ວງ ແລະ ຮ້າຍແຮງນັ້ນ, ພັກປະຊາຊົນປະຕິວັດລາວ ໄດ້ເຊີດຊູຄັນທຸງ

ຊາດປະຊາທິປະໄຕໃຫ້ສູງຂຶ້ນ, ເອົາການປະຕິວັດລາວຕິດພັນສະໜິດແໜ້ນກັບການປະຕິວັດໂລກ, ເປັນຕົ້ນແມ່ນກັບການປະຕິວັດຫວຽດນາມ: ອັນໄດ້ສ້າງເປັນກຳລັງແຮງສັງລວມຂອງບຸກສະໄໝ ຕີເອົາໄຊຊະນະ ຈັກກະພັດອາເມລິກາຜູ້ຮຸກຮານ ເຊິ່ງໃນເມື່ອກ່ອນຄົນທັງຫລາຍ ໄດ້ຖືວ່າບໍ່ມີໃຜຈະສາມາດຕີເອົາຊະນະພວກເຂົາໄດ້.

ພາຍຫລັງ ໄດ້ຖືກປະລາໄຊຢ່າງໜັກໜ່ວງ ຢູ່ຫວຽດນາມ, ຈັກກະພັດອາເມລິກາ ຕ້ອງຍອມເຊັນສັນຍາ ປາລີກ່ຽວກັບຫວຽດນາມໃນວັນທີ ໒໗/໑/໗໓, ຮັບຮູ້ເອກະລາດອະທິປະໄຕ, ເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຫວຽດນາມ. ຢູ່ລາວເຮົາບ້ອນການຖືກປະລາໄຊຢ່າງໜັກໜ່ວງຢູ່ໃນສົງຄາມພິເສດເພີ້ມທະວີ, ຈັກກະພັດອາເມລິກາກໍເຫັນວ່າ ບໍ່ມີທາງອອກອື່ນອີກ ຈຶ່ງຈຳເປັນຕ້ອງໃຫ້ລັດຖະບານວຽງຈັນ ເຊັນສັນຍາວຽງຈັນ ກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງຊາດຢູ່ລາວເຮົາ ໃນວັນທີ ໒໑/໒/໗໓ ແລະ ຖັດຈາກນັ້ນກໍໄດ້ເຊັນເອກະສານບັນທຶກ (໑໙/໙/໑໙໗໓), ສ້າງຕັ້ງລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ (໕/໔/໑໙໗໔)

ໄຊຊະນະໃຫຍ່ຫລວງ ທີ່ມີຄວາມໝາຍເປັນປະຫວັດສາດນີ້ ແມ່ນໝາກຜົນສັງລວມ ຂອງການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາເປັນເວລາ ໑໘ ປີ, ສ້າງເປັນບາດລ້ຽວປະຫວັດສາດໃໝ່ ໃຫ້ແກ່ຊາດເຮົາ.

໔). ປະສານສົມທົບ ໓ ບາດຄ້ອນຍຸດທະສາດລຸກຮື້ຂຶ້ນຍຶດອຳນາດການປົກຄອງ, ສຳເລັດການປະຕິວັດຊາດປະຊາທິປະໄຕໃນຂອບເຂດທົ່ວປະເທດ.

ເລີ່ມແຕ່ເດືອນ ໓/໑໙໗໔ ເປັນຕົ້ນມາບົນພື້ນຖານໄຊຊະນະຂອງການຕໍ່ສູ້ກູ້ຊາດ ຕ້ານຈັກກະພັດ ອາເມລິກາ, ໂດຍໄດ້ນຳໃຊ້ພື້ນຖານກົດໝາຍຂອງສັນຍາວຽງຈັນ, ພັກເຮົາໄດ້ຊຸກຍູ້ການຕໍ່ສູ້ການເມືອງ–ກົດໝາຍ–ການຕ່າງປະເທດ ສົມທົບກັບການຕໍ່ສູ້ການທະຫານ ຢ່າງແຂງແຮງ, ແນ່ໃສ່ສືບຕໍ່ຂະຫຍາຍກຳລັງໃນທຸກດ້ານ ສ້າງທ່າ ແລະ ກຳລັງໃໝ່ ຂອງການປະຕິວັດ ຢູ່ໃນກະໂດເຂດຂອງສັດຕູ ກຽມເງື່ອນໄຂໃຫ້ການຍຶດອຳນາດໃນທົ່ວປະເທດ. ມາຮອດລະດູແລ້ງ ປີ ໑໙໗໕, ໄຊຊະນະຂອງສອງປະເທດອ້າຍນ້ອງ, ເປັນຕົ້ນແມ່ນໄຊຊະນະໃຫຍ່ຂອງການບຸກໂຈມຕີຍຸດທະສາດໃນບັ້ນຮົບ ໂຮຈິມິນປະຫວັດສາດ ໃນວັນທີ ໓໐ ເດືອນເມສາ ໑໙໗໕ ໄດ້ກະທົບຢ່າງແຂງແຮງ ໂດຍກົງ

ເຂົ້າໃສ່ສະພາບການຢູ່ລາວສ້າງກາລະໂອກາດອັນສະດວກໃຫ້ແກ່ການຍຶດອຳນາດໃນຂອບເຂດທົ່ວປະເທດລາວເຮົາ.

ວັນທີ ໓/໕/໑໙໗໕, ພັກເຮົາໄດ້ສັງເກດເຫັນວ່າສະພາວະການປະຕິວັດໄດ້ສຸກງອມແລ້ວ, ດັ່ງນັ້ນ ຈຶ່ງຕົກລົງປຸກລະດົມຂະບວນການລຸກຮືຂຶ້ນພາບດຽວກັນ, ບຸກໂຈມຕີຢ່າງແຂງແຮງ ແລະ ຮອບດ້ານ, ຍາດເອົາອຳນາດການປົກຄອງໃນທົ່ວປະເທດ ດ້ວຍ ໓ ບາດກ້າວຍຸດທະສາດເສີມຂະຫຍາຍທ່າສະຫງານຢູ່ທັງ ໓ ເຂດຢ່າງທົ່ວເຖິງ.

– ດ້ວຍກຳລັງແຮງ ສັງລວມຂອງປວງຊົນທັງຊາດພາຍໃຕ້ການນຳພາຂອງພັກ, ພຽງແຕ່ ໓ ເດືອນກວ່າ, ກອງທັບ ແລະ ປະຊາຊົນເຮົາ ໄດ້ລຸກຂຶ້ນຕໍ່ສູ້ທັບມ້າງກົງຈັກປົກຄອງອັນໃຫຍ່ໂຕ, ພ້ອມທັງກອງທັບ ແລະ ກຳລັງຕຳຫລວດຝ່າຍຂວາ, ຖືກພັງທະລາຍ, ສ້າງອຳນາດການປົກຄອງປະຕິວັດໃນທົ່ວປະເທດ.

ບົນພື້ນຖານ ໄຊຊະນະອັນຕັດສິນດັ່ງກ່າວ ໃນວັນທີ ໒ ທັນວາ ປີ ໑໙໗໕, ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ໄດ້ຮັບຮອງເອົາການສະລະ ລາຊະບັນລັງຂອງເຈົ້າຊີວິດ, ຍຸບເລີກລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະຄະນະມົນຕີປະສົມການເມືອງແຫ່ງຊາດ ກອງປະຊຸມໃຫຍ່

ໄດ້ດຳລົງລົບລ້າງລະບອບລາຊາທິປະໄຕ ທີ່ຫລ້າສະໄໝ ຢ່າງສິ້ນເຊີງ ແລະ ສ້າງຕັ້ງລະບອບສາທາລະນະລັດປະຊາທິປະໄຕປະຊາຊົນລາວຂຶ້ນ: ກອງປະຊຸມໃຫຍ່ໄດ້ກຳນົດທຸງຊາດ, ເພງຊາດ, ສ້າງຕັ້ງສະພາປະຊາຊົນສູງສຸດ, ແຕ່ງຕັ້ງປະທານປະເທດ ແລະ ສ້າງຕັ້ງລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ.

ເຫດການດັ່ງກ່າວຂ້າງເທິງນັ້ນ ໄດ້ເຮັດໃຫ້ປະຫວັດສາດຂອງປະເທດຊາດເຮົາຫັນໄປສູ່ສັງກາດໃໝ່– ສັງກາດແຫ່ງຄວາມເປັນເອກະລາດ ແລະ ອິດສະລະພາບຕະຫລອດເທົ່າໃດໆ: ສັງກາດແຫ່ງການນຳເອົາປະຊາຊົນບັນດາຊົນຊາດລາວ ກ້າວຂຶ້ນສູ່ຖານະເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ, ພາປະເທດຊາດເຮົາ ກ້າວເຂົ້າສູ່ເສັ້ນທາງສີວິໄລກ້າວໜ້າ, ນັ້ນແມ່ນເສັ້ນທາງກ້າວຂຶ້ນສັງຄົມນິຍົມສັງຄົມກອມມູນິດ ເຊິ່ງເປັນຍອດປາຖະໜາຂອງມວນມະນຸດ.

໕). ໕ ປີແຫ່ງການປົກປັກຮັກສາ ແລະ ກໍ່ສ້າງສາທາລະນະລັດປະຊາທິປະໄຕປະຊາຊົນລາວ.

ລະບອບສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ແມ່ນຜົນສຳເລັດອັນປະເສີດ ທີ່ມີຄວາມໝາຍປະຫວັດ
ສາດແຫ່ງການນຳອັນສະຫລາດສ່ອງໃສ ແລະ ປັນຍາສາ
ສາດຂອງພັກປະຊາຊົນປະຕິວັດລາວ. ໃນໄລຍະ ໔ ປີກ່ວາ
ຜ່ານມາ, ພວກເຮົາມີຄວາມສາມາດ ປົກປັກຮັກສາລະ
ບອບສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໄວ້ໄດ້
ຢ່າງໝັ້ນຄົງໃນ ໔ ປີກ່ວາແຫ່ງການສະຖາປະນາລະບອບ
ສາທາລະນະລັດປະຊາທິປະໄຕປະຊາຊົນລາວເຮົາ, ພວກ
ເຮົາ ໄດ້ປະສົບກັບຄວາມຫຍຸ້ງຍາກຫລາຍປະການ, ແຕ່
ພວກເຮົາກໍສາມາດ ນຳເອົາຜົນສຳເລັດຫລາຍປະການ ມາ
ໃຫ້ປະຊາຊົນເຮົາ.

ເຖິງແມ່ນວ່າ ການກ້າວຂື້ນສັງຄົມນິຍົມຂອງປະເທດ
ເຮົາ ແມ່ນເລີ່ມຈາກພື້ນຖານການຜະລິດນ້ອຍ ເຕັມໄປ
ດ້ວຍລັກສະນະທຳມະຊາດ ອີກບໍ່ພໍຊ້ຳພັດຖືກສົງຄາມທຳ
ລາຍເປັນເວລາຫລາຍປີຜ່ານມາ, ໃນສັງຄົມຍັງມີຜົນຮ້າຍ
ຫລາຍປະການ ທີ່ລັດທິລ່າເມືອງຂື້ນແບບໃໝ່ປະໄວ້, ໄພ
ທຳມະຊາດເກີດຂື້ນຢ່າງລຽນຕິດ ແລະ ໜັກໜ່ວງ; ດ້ານ
ໜຶ່ງອີກ ຊ້ຳພັດຍັງປະເຊີນໜ້າກັບຄວາມຫຍຸ້ງຍາກ ອັນ
ໃຫຍ່ໂຕ ເຊິ່ງພວກເຮົາຕ້ອງຕອບໂຕ້ຄືນ, ນັ້ນແມ່ນພວກ
ຈັກກະພັດ ແລະ ພວກປະຕິການສາກົນ ເວລາໃດກໍມີເຈດ

ຕະນາທຳລາຍ, ຮຸກຮານ, ກີນກິນປະເທດເຮົາກໍດາມ, ແຕ່ພາຍໃຕ້ການນຳພາອັນໃກ້ຊິດດີເເທດ ແລະ ຮອບດ້ານຂອງພັກ, ປະຊາຊົນບັນດາຊົນຊາດລາວເຮົາ ໄດ້ເສີມຂະຫຍາຍມູນເຊື້ອສາມັກຄີ ຕໍ່ສູ້ອັນເດັດດ່ຽວ ແລະ ບໍ່ຍອມຈຳນົນ,ເສີມຂະຫຍາຍລັດທິວິລະຊົນປະຕິວັດ ແລະ ລັດທິຮັກຊາດອັນແທ້ຈິງ, ອອກແຮງງານຢ່າງຂະຫຍັນຫ້າວຫັນ, ສູ້ຮົບຢ່າງອົງອາດກ້າຫານ, ຜ່ານຜ່າ ຄວາມ ຫຍຸ້ງ ຍາກນາງ ປະການ, ສ້າງຜົນງານອັນສຳຄັນໃນຫລາຍດ້ານ.

ການຜະລິດກະສິກຳປ່າໄມ້ ບໍ່ສະເພາະແຕ່ໄດ້ຮັບການຟື້ນຟູຄືນໃໝ່ເທົ່ານັ້ນ, ຫາກຍັງໄດ້ຂະຫຍາຍກວ້າງອອກຕື່ມອີກ; ນຳໃຊ້ວິທະຍາສາດເຕັກນິກເຂົ້າໃນການຜະລິດກະສິກຳປ່າໄມ້ ແລະ ລ້ຽງສັດ; ການດັດສ້າງສົງຄົມນິຍົມໃນຂະແໜງການກະສິກຳ ໄດ້ດຳເນີນໄປຢ່າງໄວວາ.

ພວກເຮົາໄດ້ຟື້ນຟູ ແລະ ຮັກສາການເຄື່ອນໄຫວຜະລິດຂອງໂຮງງານອຸດສາຫະກຳໃນຫລາຍແຫ່ງ ພ້ອມກັນນັ້ນ ກໍໄດ້ກໍ່ສ້າງກິດຈະການອຸດສາຫະກຳອັນສຳຄັນໃໝ່ໄດ້ຈຳນວນໜຶ່ງ. ວຽກງານສຶກສາ, ວັດທະນະທຳ, ສາທາລະນະສຸກໄດ້ຂະຫຍາຍຕົວໄວກວ່າເວລາໃດໝົດ ທຽບກັບສະໄໝກ່ອນຜ່ານມາ.

ຕາໜ່າງການຄ້າຂອງລັດ, ການ ຄ້າ ລວມ ໝູ່ ນັບມື້ນັບຂະຫຍາຍຕົວອອກຢ່າງກວ້າງຂວາງ ອັນໄດ້ປະກອບສ່ວນເຂົ້າໃນການຈໍ່ລະຈອນແຈກຢາຍ, ຊຸກຍູ້ການຜະລິດ, ປົວແປງ ຊີ ວິດ ການ ເປັນຢູ່ ຂອງປະຊາຊົນ ໃຫ້ດີຂຶ້ນເປັນກ້າວໆ. ໂສມໜ້າຂອງສັງຄົມລາວ ນັບມື້ນັບມີການປ່ຽນແປງໃໝ່. ການດຳເນີນຊີວິດອັນສົດຊື່ນປອດປົ່ງ ແລະ ເຂັ້ມແຂງ ຂອງລະບອບສັງຄົມນິຍົມ ພວມໄດ້ຄ່ອຍໆ ປະກົດຕົວຂຶ້ນຢູ່ໃນບັນດາຕົວເມືອງ ແລະ ຊົນນະບົດ.

ພວກເຮົາໄດ້ຜາບແພ້ກົນອຸບາຍ ແລະ ການກະທຳມ້າງເພທຳລາຍ, ກໍ່ການກະບົດໂຄ່ນລົ້ມ, ຮຸກຮານຂອງພວກແຜ່ອານາເຂດ ແລະ ແຜ່ອຳນາດຊາດໃຫຍ່ປັກກິ່ງ, ຂອງພວກຈັກກະພັດ ແລະ ພວກປະຕິການສາກົນອື່ນໆ.

ທາງດ້ານສາກົນ, ການພົວພັນ ແລະ ຄວາມສາມັກຄີແບບພິເສດ ລະຫວ່າງ ປະຊາຊົນລາວ ກັບປະຊາຊົນຫວຽດນາມ ແລະ ກຳປູເຈຍອ້າຍນ້ອງ ນັບມື້ໄດ້ຮັບການປັບປຸງຍິ່ງກວ່າເວລາໃດໝົດ, ຄວາມ ສາ ມັກ ຄີ ລະຫວ່າງປະເທດເຮົາ ກັບສະຫະພາບໂຊວຽດ ແລະ ປະເທດສັງຄົມນິຍົມອ້າຍນ້ອງອື່ນ ໆ ກໍໄດ້ ຮັບ ການ ປັບ ປຸງເພີ່ມທະວີຂຶ້ນ. ກ່ຽວກັບນະໂຍບາຍສັນຕິພາບ, ສັນຖະ

ວະໄນຕີລະຫວ່າງປະເທດເຮົາ ກັບລາຊະອານາຈັກໄທ ໃນ ຖານບ້ານໃກ້ເຮືອນຄຽງ ກໍໄດ້ຮັບຜົນດີອັນດັ່ງໜ້າຈຳນວນ ໜຶ່ງ. ການພົວພັນການຕ່າງປະເທດ ແລະ ການຮ່ວມມື ທາງເສດຖະກິດ ລະຫວ່າງປະເທດເຮົາ ກັບຫລາຍປະ ເທດໃນໂລກ ພວມໄດ້ຂະຫຍາຍຕົວຢ່າງກວ້າງຂວາງ.

ໄຊຊະນະດັ່ງກ່າວ ພິສູດໃຫ້ເຫັນການນຳຂອງພັກເຮົາ ແມ່ນສະຫລາດສ່ອງໃສທີ່ສຸດ ປັ້ງປື້ນກຳລັງແຮງ ແລະ ການກ້າວຂຶ້ນ ສັງຄົມນິຍົມອັນຫນັກແໜ້ນ ຂອງປະເທດ ເຮົາ ໂດຍບໍ່ມີສິ່ງໃດຈະສາມາດກີດຂວາງໄດ້.

**II_** ພັກປະຊາຊົນປະຕິວັດລາວຜູ້ຈັດຕັ້ງ ແລະ ນຳ ພາທຸກໄຊຊະນະຂອງການປະຕິວັດລາວ.

ພາຍໃຕ້ການນຳພາຂອງພັກເຮົາ, ປະຊາຊົນບັນດາ ຊົນຊາດລາວ ໄດ້ຜ່ານການຕໍ່ສູ້ອັນເຕັມໄປດ້ວຍຄວາມທຸກ ຍາກລຳບາກ, ລະອິດລະອຽວ, ເຕັມໄປດ້ວຍຄວາມເສຍ ສະລະ ສາມາດຜ່ານຜ່າອຸປະສັກນາງປະການ ແລະ ບາດເອົາໄຊຊະນະອັນໃຫຍ່ຫລວງ ແລະ ສະຫງ່າງາມມາ ໄດ້ໃນເວລາກວ່າໜຶ່ງສ່ວນສີ່ຂອງສັດຕະວັດຜ່ານມາ. ຈາກ ນັ້ນພວກເຮົາສາມາດຖອດຖອນບົດຮຽນບາງປະການ ພ້ອມ ກັນນັ້ນ ກໍເປັນເຫດຜົນຂອງໄຊຊະນະ ທີ່ພວກເຮົາບາດມາ

ໄດ້:

໑). ບັນດາໄຊຊະນະອັນຍິ່ງໃຫຍ່, ມີຄວາມໝາຍປະຫວັດສາດ ແລະ ຄວາມໝາຍຍຸກສະໄໝ ຂອງການປະຕິວັດ ປະເທດເຮົາໄດ້ຕິດພັນຢ່າງສະໜິດແໜ້ນ ກັບການນຳພາຂອງພັກເຮົາ ເຊິ່ງໄດ້ກຳນົດຢ່າງຖືກຕ້ອງ ກ່ຽວກັບແນວທາງລວມ ໃຫ້ແກ່ໄລຍະການປະຕິວັດຊາດ ປະຊາທິປະໄຕ ກໍຄືໄລຍະການປະຕິວັດສັງຄົມນິຍົມ ເຊິ່ງໃນນັ້ນໄດ້ສະຫລຸບສັງລວມ ບັນດາໜ້າທີ່ຍຸດທະສາດ, ຈຸດໝາຍ, ກຳລັງໜູນ ແລະ ບັນດາວິທີການປະຕິວັດອັນເປັນພື້ນຖານສອດຄ່ອງກັບບັນດາມູນຫລັກຂອງລັດທິ ມາກ – ເລນິນ, ສອດຄ່ອງກັບກົດເກນລວມຂອງການປະຕິວັດ ແລະ ບັນດາຈຸດພິເສດຂອງປະເທດເຮົາ.

ຈາກນັ້ນພວກເຮົາຢືນຢັນວ່າ ແນວທາງອັນຖືກຕ້ອງຂອງພັກ ແມ່ນເປັນປັດໃຈພື້ນຖານ ຕັດສິນຊີ້ຂາດທຸກໄຊຊະນະຂອງການປະຕິວັດລາວ ຕັ້ງແຕ່ກ່ອນມາຮອດດຽວນີ້ກໍຄືແຕ່ນີ້ເມືອໜ້າ.

໒). ໄຊຊະນະອັນຍິ່ງໃຫຍ່ນັ້ນ ກໍແມ່ນໄຊຊະນະຂອງກຳລັງແຮງ ແຫ່ງຄວາມສາມັກຄີ ຂອງປະຊາຊົນບັນດາຊົນຊາດລາວ.

ປະເທດເຮົາມີ ໖໐ ກ່ວາຊົນຊາດ ຊົນເຜົ່າ, ສະນັ້ນ ໃນໄລຍະຜ່ານມາເວລາໃດພັກກໍຖືເອົາການກໍ່ສ້າງ ແລະປັນປຸງຄວາມສາມັກຄີພາຍໃນຊາດ ເປັນຫນ້າທີ່ຍຸດທະສາດອັນຫນຶ່ງ. ພາຍໃຕ້ລະບອບສັກດີນາ ແລະ ແອກຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນ, ທຸກຊົນຊາດຊົນເຜົ່າຢູ່ໃນລາວ ລ້ວນແຕ່ຖືກກົດຂີ່ຂູດຮີດ ຢ່າງແສນສາຫັດ, ເຂົາເຈົ້າລ້ວນແຕ່ມີຄວາມມຸ່ງມາດປາດຖະຫນາ ລວມອັນຫນຶ່ງອັນດຽວຄື ປົດປ່ອຍ, ກ້າວຂຶ້ນເປັນເຈົ້າຂອງຊາຕາກຳຂອງຕົນເອງ ແລະ ກໍ່ສ້າງຊີວິດໃຫມ່ ແຫ່ງຄວາມຜາສຸກຊົວກາລະບານ. ສະນັ້ນພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ປະຊາຊົນບັນດາຊົນຊາດລາວຕະຫລອດ ໖໐ ກ່ວາປີມານັ້ນ ໄດ້ສາມັກຄີເປັນນ້ຳຫນຶ່ງໃຈດຽວກັນ, ພ້ອມກັນ ສູ້ຮົບຢູ່ໃນຂຸມຄອງອັນດຽວກັນ ເພື່ອປົດປ່ອຍປະເທດຊາດ, ປົດປ່ອຍຖິ່ນຖານບ້ານຊ່ອງຂອງຕົນ.

ຍ້ອນແນວທາງອັນຖືກຕ້ອງ ແລະ ເປົ້າທຳຂອງພັກ, ຄວາມອາຄາດບາດຫມາງລະຫວ່າງຊົນຊາດຕໍ່ຊົນເຜົ່າ ເຊິ່ງແມ່ນລະບອບສັກດີນາ ແລະ ຈັກກະພັດໄດ້ກໍ່ຂຶ້ນໃນເມື່ອກ່ອນນັ້ນ ໄດ້ຮັບການແກ້ໄຂ ແລະ ລົບລ້າງເທື່ອລະກ້າວ ສ້າງສະຕິເປັນເຈົ້າລວມຫມູ່ໃນມະຫາຄອບຄົວປະຕິວັດ, ມີ

ຄວາມສະເໝີພາບລະຫວ່າງຊົນຊາດ, ປັບປຸງຄວາມສາມັກຄີອັນແໜ້ນແກ່ນລະຫວ່າງຊົນຊາດຊົນເຜົ່າດ້ວຍກັນ.

ພັກເຮົາໄດ້ສ້າງກ້ອນກຳລັງສາມັກຄີ ລະຫວ່າງບັນດາຊົນຊາດ ບົນພື້ນຖານໄດ້ປັບປຸງ ພັນທະພາບກຳມະກອນຊາວນາຢ່າງເຂັ້ມແຂງ ອັນນັ້ນ ບໍ່ພຽງແຕ່ເປັນເນື້ອໃນສຳຄັນທີ່ສຸດອັນໜຶ່ງ ໃນ ແນວ ທາງ ປະ ຕິ ວັດ ຂອງພັກເຮົາ, ແຕ່ມັນຍັງເປັນປັດໃຈພື້ນຖານມີລັກສະນະຕັດສິນໄຊຊະນະຂອງການປະຕິວັດລາວໃນໄລຍະຜ່ານມາ ກໍຄືໃນພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດສັງຄົມນິຍົມປະຈຸບັນປູ່ລາວເຮົາ.

ນ). ເວລາໃດພັກກໍປະສານສົມທົບຢ່າງຖືກຕ້ອງ ແລະ ຊຳນິຊຳນານນ້ຳໃຈ ຮັກຊາດອັນແທ້ຈິງ ກັບນ້ຳໃຈສາກົນກຳມະຊີບອັນຜ່ອງໃສ, ສົມທົບ ລະ ຫວ່າງ ຜົນ ປະ ໂຫຍດຂອງຊາດ ກັບຜົນປະໂຫຍດຂອງຊົນຊັ້ນ, ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດຕົນ ກັບກຳລັງແຮງຂອງບຸກສະໄໝ.

ລັດທິຮັກຊາດແມ່ນກຳລັງແຮງຂອງຊາດເຮົາ ນັບແຕ່ພັກ ຂອງ ຊົນ ຊັ້ນກຳມະກອນລາວໄດ້ກຳເນີດເກີດຂຶ້ນ: ກຳລັງແຮງ ຂອງ ມູນ ເຊື້ອ ນັ້ນ ໄດ້ ທະ ວີ ຄູນ ຂຶ້ນ ຕັ້ງ ຫລາຍ

ເທົ່າ, ເພາະມັນໄດ້ປະສານສົມທົບກັນລະຫວ່າງລັດທິຮັກ ຊາດອັນແທ້ຈິງ ກັບລັດທິສາກົນກຳມະຊີບ ອັນຜ່ອງໃສ ແຕ່ໃດໆມາ ພັກເຮົາໄດ້ຍຶດໝັ້ນຢູ່ໃນຈຸດຢືນທີ່ວ່າ : ການ ປະຕິວັດລາວ ເປັນພາກສ່ວນຫນຶ່ງຂອງການປະຕິວັດໂລກ, ມັນ ພົວ ພັນ ຢ່າງ ສະ ຫນິດ ແຫນ້ນ ກັບການປະຕິວັດໃນ ແຫລມອິນດູຈີນ ແລະ ການປະຕິວັດໂລກ.

ມີແຕ່ເຮັດການປະຕິວັດ ກຳມະຊີບເທົ່ານັ້ນ, ປະເທດ ຊາດ ແລະ ຊົນຊັ້ນຜູ້ອອກແຮງງານຈິ່ງໄດ້ຮັບການປົດປ່ອຍ ຢ່າງແທ້ຈິງ; ມີແຕ່ຊາດທີ່ເປັນ ເອກະລາດ ໂດຍແມ່ນຊົນ ຊັ້ນກຳມະກອນ ເປັນຕົວແທນອັນມີກອງນຳຫນ້າຂອງຕົນ ເປັນຜູ້ນຳພາ.

ການພົວພັນແບບສູ້ຮົບອັນຍາວນານ ແລະ ຮອບດ້ານ ລະຫວ່າງການປະຕິວັດລາວ ກັບການປະຕິວັດຫວຽດນາມ ແລະ ກຳປູເຈຍ ອ້າຍນ້ອງ, ເປັນສາຍພົວພັນແບບພິເສດ ທີ່ໄດ້ສ້າງເປັນກຳລັງແຮງ ອັນມະຫັດສະຈັນ ທາງຈິດໃຈ ແລະ ດ້ານວັດຖຸ, ກາຍເປັນປັດໃຈຫນຶ່ງ ທີ່ສຳຄັນຮັບປະ ກັນໄຊຊະນະ ທັງ ເປັນ ກົດ ເກນ ແຫ່ງ ການຂະຫຍາຍຕົວ ຂອງການປະຕິວັດໃນແຕ່ລະປະເທດ. ຄວາມສາມັກຄີລະ ຫວ່າງການປະຕິວັດລາວ ກັບສະຫະພາບໂຊວຽດ ແລະ

ບັນດາປະເທດສັງຄົມນິຍົມອ້າຍນ້ອງ, ກັບ ສານ ກະ ແສ ຟອງປະຕິວັດໄດ້ສ້າງເປັນກຳລັງແຮງສັງລວມ ອັນໃຫຍ່ໂຕ ມະໂຫຖານໃຫ້ພວກເຮົາ ຕີເອົາຊະນະສັດຕູທຸກໂຕ, ແລະ ສືບຕໍ່ບາດເອົາໄຊຊະນະໃນໄລຍະໃຫມ່ຂອງການປະຕິວັດ.

໔). ພັກປະຊາຊົນປະຕິວັດລາວ ນັບແຕ່ກໍ່ຕັ້ງຕໍ່ຮັບ ໃຊ້ປະຊາຊົນ ຢ່າງສຸດອົກສຸດໃຈ ຕິດ ພັນ ຢ່າງ ສະ ຫນິດ ແຫນ້ນກັບມະຫາຊົນ, ໂຄສະນາ, ອົບຮົມຈັດຕັ້ງ ແລະ ປຸກລະດົມ ຂະບວນການປະຕິວັດຂອງມະຫາຊົນ.

ອັນນັ້ນແມ່ນເປັນທິດນຳໃຫຍ່ອັນຫນຶ່ງ ໃນການກໍ່ສ້າງ ພັກ ເຊິ່ງພັກໄດ້ຍຶດຫມັ້ນຕະຫລອດມາ, ທັດສະນະວັດຖຸນິ ຍົມປະຫວັດສາດ ຂອງພັກແມ່ນມະຫາຊົນເປັນຜູ້ສ້າງປະ ຫວັດສາດ ແລະ ການປະຕິວັດແມ່ນພາລະກິດຂອງມະ ຫາຊົນ.

ປະຈຸບັນນີ້ ພັກເຮົາເປັນພັກທີ່ກຳອຳນາດ, ຫນ້າທີ່ຮັບ ຜິດຊອບຂອງພັກຕໍ່ມະຫາຊົນຍິ່ງຫນັກຫນ່ວງກ່ວາເກົ່າແລະ ພົວພັນກັບມະຫາຊົນກໍຍິ່ງໄດ້ຂະຫຍາຍກວ້າງອອກໃນທຸກ ຂົງເຂດແຫ່ງວິວັດການເປັນຢູ່ຂອງສັງຄົມ.

ໃນໄລຍະໃຫມ່ຂອງການປະຕິວັດ, ພັກໄດ້ສືບຕໍ່ເສີມຂະ ຫຍາຍສິດເປັນເຈົ້າລວມຫມູ່ຂອງມະຫາຊົນ; ນະໂຍບາຍ

ຂອງພັກແລະລັດເຮົາ ລ້ວນແຕ່ເລັ່ງໃສ່ ເພື່ອຮັບໃຊ້ຜົນປະໂຫຍດອັນຊອບທຳຂອງມະຫາຊົນ.

ພັກ ມີແຜນນະໂຍບາຍປຸກລະດົມບັນດາຂະບວນການປະຕິວັດຢ່າງຟົດຟື້ນໃນໝູ່ມະຫາຊົນ ເພື່ອປະຕິບັດ ທຸກແນວທາງນະໂຍບາຍຂອງພັກ ແລະລັດໃຫ້ປະກົດຜົນເປັນຈິງຢ່າງມີໄຊ.

ພັກຊົມເຊີຍມາຫາຊົນໃນການສຳຫລວດກວດກາຕຳນິຕິຊົມການນຳພາ ຂອງບັນດາອົງການຈັດຕັ້ງ ຂອງ ພັກ, ຂອງພະນັກງານແລະສະມາຊິກພັກ.

໕)– ກຳແໜ້ນທັດສະນະກຳ ລັງ ຮຸນ ແຮງ ປະ ຕິ ວັດ, ຊຶ່ງການກໍ່ສ້າງກຳລັງການເມືອງ ຂອງມະຫາຊົນແລະກຳລັງປະກອບອາວຸດເປັນສຳຄັນ, ປະສານສົມທົບລະຫວ່າງການຕໍ່ສູ້ດ້ານການທະຫານກັບການເມືອງ ແລະການຕ່າງປະເທດ, ສ້າງກາລະໂອກາດແລະກຳແໜ້ນກາລະໂອກາດເພື່ອຕີເອົາຊະນະສັດຕູເທື່ອລະກ້າວ, ກ້າວໄປເຖິງໄຊຊະນະຢ່າງສົມບູນ.

ນັ້ນແມ່ນທັດສະນະທັງເປັນວິທີການປະຕິວັດ ປະ ດິດສ້າງອັນໜຶ່ງຂອງພັກເຮົາ.

ຕະຫລອດໄລຍະທາງຕໍ່ສູ້ປະຕິວັດ ອັນລະອິດລະອ້ຽວ,

ດຸເດືອດຂ້ຽວຂາດ, ພັກເຮົາເວລາໃດກໍຢຶດໝັ້ນຕາມທັດສະນະຂອງລັດທິມາກ-ເລນິນ ທີ່ວ່າປາກໃຫ້ການປະຕິວັດໄດ້ຮັບໄຊຊະນະຈຳຕ້ອງໃຊ້ຄວາມຮຸນແຮງປະຕິວັດ, ຕ້ອງລຸກຂຶ້ນບຸກໂຈມຕີສັດຕູໃນທຸກດ້ານທຸກທິດຢ່າງລຽນຕິດ, ການປະຕິວັດບໍ່ວ່າໄລຍະໃດຕ້ອງມີການສົມທົບແໜ້ນລະຫວ່າງກຳລັງການເມືອງຂອງມະຫາຊົນ ແລະ ກຳລັງປະກອບອາວຸດ. ໃນເມື່ອສະພາບການປ່ຽນແປງ, ພັກກໍຕ້ອງທັນຮູບການຕໍ່ສູ້ທັນເວລາ.

ຄຽງຄູ່ກັບການກໍ່ສ້າງກຳລັງການເມືອງ ຂອງມະຫາຊົນ, ພັກເຮົາໄດ້ຖືການກໍ່ສ້າງກຳລັງອາວຸດ ເປັນບັນຫາສຳຄັນທີ່ສຸດ, ເອົາໃຈໃສ່ກຳແໜ້ນ, ປັບປຸງກໍ່ສ້າງແລະຂະຫຍາຍສອງກຳລັງຮຸນແຮງບຸດທະສາດຢ່າງບໍ່ຢຸດຢັ້ງ,ເພື່ອເສີມຂະຫຍາຍກຳລັງແຮງສັງລວມ ຂອງການປະຕິວັດ, ບາດເອົາໄຊຊະນະອັນສົມບູນໃນຂັ້ນສຸດທ້າຍ.

ມາຮອດເວລານີ້, ພວກເຮົາໜູນໃຊ້ບົດຮຽນນັ້ນໃນເງື່ອນໄຂໃໝ່, ສືບຕໍ່ກໍ່ສ້າງກຳລັງການເມືອງຂອງມະຫາຊົນແລະກຳລັງປະກອບອາວຸດປະຊາຊົນ, ກໍ່ສ້າງແລະປັບປຸງອຳນາດການປົກຄອງປະຕິວັດ, ຟື້ນຟູແລະຂະຫຍາຍເສດຖະກິດແຫ່ງຊາດໃຫ້ນັບມື້ນັບເຂັ້ມແຂງແຮງກ້າ ເພື່ອຮັບປະ

ກັບໃຫ້ແກ່ໄຊຊະນະໃນພາລະກິດປົກປັກຮັກສາແລະກໍ່ສ້າງ ປະເທດຊາດສັງຄົມນິຍົມຂອງພວກເຮົາ.

ປ)– ກໍ່ສ້າງພັກໃຫ້ເຂັ້ມແຂງ ທາງດ້ານການເມືອງ ແນວຄິດ ແລະໜັກແໜ້ນທາງດ້ານການຈັດຕັ້ງຢ່າງບໍ່ຢຸດ ຢັ້ງ.

ພັກເປັນກອງນຳໜ້າທີ່ມີການຈັດຕັ້ງ ແລະແມ່ນການ ຈັດຕັ້ງສູງສຸດຂອງຊົນຊັ້ນກຳມະກອນ ເປັນຕົວແທນ ຢ່າງ ແທ້ຈິງ ແລະຊື່ສັດສຸດຈະລິດໃຫ້ແກ່ສິດຜົນປະໂຫຍດຂອງ ປະຊາຊົນຜູ້ອອກແຮງງານບັນດາຊົນຊາດລາວ ແລະຂອງ ຊາດລາວທັງໝົດ. ດ້ວຍເຫດນັ້ນໃນທຸກໄລຍະການປະຕິ ວັດທີ່ຜ່ານມາ, ເວລາໃດພັກກໍໄດ້ເອົາໃຈໃສ່ເປັນປະຈຳໃນ ການກໍ່ສ້າງພັກທາງດ້ານການເມືອງແນວຄິດ ແລະການ ຈັດຕັ້ງ. ການກໍ່ສ້າງພັກໃນສາມດ້ານນີ້ເວລາໃດມັນກໍຕິດ ພັນນຳກັນຢ່າງສະໜິດແໜ້ນ.

ພັກເຮົາເວລາໃດກໍກຳແໜ້ນ ແລະ ໝູນໃຊ້ຫລັກມູນ ທິດສະດີ ມາກ–ເລນິນ ກ່ຽວກັບການກໍ່ສ້າງພັກແບບໃໝ່ ຂອງຊົນຊັ້ນກຳມະກອນ. ພັກມີແນວທາງອັນຖືກຕ້ອງໃນ ແຕ່ລະໄລຍະຂອງການປະຕິວັດ, ມີມູນເຊື້ອສາມັກຄີ ເປັນ ເອກະພາບກັນຕັ້ງແຕ່ເທິງລົງລຸ່ມ, ມີຖັນແຖວສະມາຊິກ

ເປັນຫລັກແຫລ່ງແກ່ນສານ ເຊິ່ງໄດ້ຮັບການເຝິກຝົນ ຫລໍ່ຫລອມແລະທົດສອບ ໃນແປວໄຟແຫ່ງການຕໍ່ສູ້ປະຕິວັດອັນເປັນເວລາຍາວນານມາແລ້ວ.

ໃນເງື່ອນໄຂທີ່ພັກເຮົາກຳອຳນາດ, ບົ່ງຕ້ອງຖືເປັນສຳຄັນໃນຄວາມເປັນເອກະພາບທາງດ້ານການເມືອງ, ແນວຄິດແລະການຈັດຕັ້ງ: ເອົາໃຈໃສ່ຈິດຈໍ່ສຶກສາອົບຮົມເພື່ອຍົກສູງຄຸນນະພາບບັນດາອົງການຈັດຕັ້ງຂອງພັກ, ຍົກສູງຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດປະຕິວັດຂອງພະນັກງານ, ສະມາຊິກພັກໃຫ້ທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່. ພ້ອມກັບ ນັ້ນເອົາໃຈໃສ່ບູລະນະອົງການຈັດຕັ້ງຂອງພັກ, ເປັນຕົ້ນແມ່ນຕ້ອງເພີ່ມທະວີປັບປຸງບັນດາການຈັດຕັ້ງ ຮາກຖານ ຂອງພັກ, ກໍ່ສ້າງຖັນແຖວສະມາຊິກພັກໄດ້ດີ.

ການຍົກສູງຄຸນນະພາບ ໃຫ້ແກ່ບັນດາອົງການຈັດຕັ້ງຂອງພັກ ແລະພະນັກງານ, ສະມາຊິກພັກ, ຕ້ອງຕິດພັນຢ່າງສະໜິດແໜ້ນ ກັບການຍົກສູງຄວາມສາມາດ ໃນການຄຸ້ມຄອງຂອງລັດ, ການກໍ່ສ້າງແລະປັບປຸງບັນດາອົງການຈັດຕັ້ງມະຫາຊົນ ນັ້ນແມ່ນເງື່ອນໄຂອັນພື້ນຖານເພື່ອໃຫ້ພັກເຮົາເຮັດຫລ້ອນໜ້າທີ່ນຳພາ ພາລະກິດປະຕິວັດ

ສັງຄົມນິຍົມໃນປະຈຸບັນ.

**III.** ພາລະກຳປະຫວັດສາດຂອງພັກປະຊາຊົນປະຕິວັດລາວໃນສະພາບການໃໝ່.

໑)– ພັກປະຊາຊົນປະຕິວັດລາວແມ່ນພັກ ມາກ–ເລນິນ ອັນແທ້ຈິງ. ພາຍຫລັງທີ່ພັກເຮົາໄດ້ນຳພາການປະຕິວັດຊາດປະຊາທິປະໄຕ ໄດ້ຮັບໄຊຊະນະຢ່າງສົມບູນແລ້ວ, ພາລະກຳປະຫວັດສາດ ຂອງພັກເຮົາ ແມ່ນປະເທດຊາດກ້າວຂຶ້ນສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ.

ໃນໄລຍະໃໝ່ຂອງການປະຕິວັດ ໂດຍໝູນໃຊ້ທິດສະດີ ມາກ – ເລນິນ ຢ່າງປະດິດສ້າງເຂົ້າໃນພຶດຕິກຳຂອງປະເທດຕົນ, ພັກໄດ້ກຳນົດແນວທາງປະຕິວັດສັງຄົມນິຍົມຢູ່ໃນປະເທດເຮົາຄື: ເພີ່ມທະວີຄວາມສາມັກຄີປວງຊົນ, ສາມັກຄີບັນດາຊົນຊາດ, ກຳແຫນ້ນແລະເພີ່ມທະວີຜະເດັດການກຳມະຊີບ, ປະຕິບັດແລະເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນຜູ້ອອກແຮງງານ, ດຳເນີນການປະຕິວັດທັງ ໓ ປະການໄປພ້ອມໆກັນ, ການປະຕິວັດການພົວພັນແຫ່ງການຜະລິດ, ການປະຕິວັດວິທະຍາສາດເຕັກນິກ, ການປະຕິວັດແນວຄິດວັດທະນະທຳ, ໃນນັ້ນເອົາການ

ປະຕິວັດວິທະຍາສາດເຕັກນິກເປັນຂໍກຸນແຈຕົ້ນຕໍ ແລະເອົາການປະຕິວັດແນວຄິດວັດທະນະທຳ ໄປກ່ອນກ້າວ ໜຶ່ງ : ຈັດຕັ້ງການຜະລິດຄືນໃໝ່. ເອົາການກະສິກຳແລະປ່າໄມ້ເປັນພື້ນຖານເພື່ອຂະຫຍາຍອຸດສາຫະກຳ, ປະຕິບັດການຫັນເປັນອຸດສາຫະກຳສັງຄົມນິຍົມ ເທື່ອລະກ້າວ,. ຖືເອົາການຫັນປ່ຽນອຸດສາຫະກຳເປັນໜ້າທີໃຈກາງຕະ ຫລອດສະໄໝຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ, ກໍ່ສ້າງການຜະລິດຂະໜາດໃຫຍ່ສັງຄົມນິຍົມ, ກໍ່ສ້າງລະບອບເປັນເຈົ້າລວມໝູ່ສັງຄົມນິຍົມ : ກໍ່ສ້າງວັດທະນະທຳໃໝ່, ຄົນໃໝ່ສັງຄົມນິຍົມ, ລົບລ້າງລະບອບຄົນຂູດຮີດຄົນ, ລົບລ້າງຄວາມທຸກຍາກຫລ້າຫລັງເປັນກ້າວໆ.... ເຊີດຊູສະຕິລະວັງຕົວປະຕິວັດຢູ່ສະເໝີ, ເພີ່ມທະວີກຳລັງປ້ອງກັນຊາດ ປ້ອງກັນຄວາມສະຫງົບ ທັບມ້າງທຸກກົນອຸບາຍຂອງຈັກກະພັດແລະພວກປະຕິການ, ພວກລູກມືຢ່າງເດັດດ່ຽວ ແລະຫັນການປົກປັກຮັກສາ ແລະບູລະນະຄວາມເປັນເອກະລາດ, ເອກະພາບຂອງປະເທດຊາດ, ປົກປັກຮັກ ສາ ໝາກ ຜົນແຫ່ງການອອກແຮງງານຂອງປະຊາຊົນ, ກໍ່ສ້າງປະເທດລາວສັນຕິພາບ ເອກະລາດ, ເອກະພາບ ແລະສັງຄົມນິຍົມ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການປະຕິ

ວັດ ແລະປົກປັກຮັກສາສັນຕິພາບຢູ່ໃນອາຊີອາຄະເນ ແລະ ໃນໂລກ...

ການວາງແນວທາງກ້າວຂຶ້ນ ຂອງການປະຕິວັດ ໄດ້ ຢ່າງຖືກຕ້ອງ, ການຊອກເຫັນໄດ້ກົດເກນປະຕິວັດສັງຄົມນິ ຍົມຢູ່ປະເທດເຮົານັ້ນ ແມ່ນຜົນສຳເລັດອັນໃຫຍ່ໂຕ ທີ່ສຸດ ຂອງພັກເຮົາ: ມັນສ່ອງແສງໃຫ້ເຫັນວ່າພັກເຮົາໄດ້ຮັບຮູ້ ແລະ ເຊື່ອມຊຶມບົດບາດພາລະກຳປະຫວັດສາດຂອງ ຊົນ ຊັ້ນກຳມະຊີບຢ່າງເລິກເຊິ່ງ ສາມາດກຳໄດ້ທິດທາງກ້າວ ຂຶ້ນຢ່າງຊັດເຈນ.

໖)- ເພື່ອສືບຕໍ່ປະຕິບັດແນວທາງລວມດັ່ງກ່າວ, ກອງ ປະຊຸມຄັ້ງທີ ໗ ຂອງຄະນະບໍລິຫານງານສູນກາງພັກໃນ ເດືອນທັນວາປີ ໑໙໗໙ ໄດ້ສັງເກດສະພາບການຂອງໂລກ ແລະສະພາບການພາຍໃນປະເທດ, ຕີລາຄາໄຊຊະນະທີ່ ປະຊາຊົນເຮົາຍາດມາໄດ້, ໄຈ້ແຍກຂໍ້ຫຍຸ້ງຍາກພາວະວິ ໄສ, ຂໍ້ຂາດຕົກບົກພ່ອງແລະຈຸດອ່ອນຕ່າງໆທີ່ຈະຕ້ອງແກ້ໄຂ ເພື່ອນຳເອົາພາລະກິດປະຕິວັດ ກ້າວຂຶ້ນສູ່ບາດກ້າວໃໝ່. ກອງປະຊຸມໄດ້ຮຽກຮ້ອງໃຫ້ທົ່ວພັກ, ທົ່ວປວງຊົນ, ທົ່ວ ກອງທັບຕ້ອງສຸມທຸກກຳລັງສູ້ຊົນເພື່ອສຳເລັດ ໓ ໜ້າທີ່ ຄືດັ່ງລຸ່ມນີ້:

ກ/– ເພີ່ມທະວີຄວາມສາມັກຄີທົ່ວປວງຊົນ, ສາມັກຄີບັນດາຊົນຊາດ, ອອກແຮງເຊີດຊູສະຕິລະວັງຕົວປະຕິວັດໃຫ້ສູງ, ກຽມພ້ອມກັບແລະຕ້ານການຮຸກຮານ, ກັບ ແລະຕ້ານການກະບົດ, ການໂຄ້ນລົ້ມ, ກັບແລະຕ້ານທຸກເລ່ລ່ຽມປ່ຽນໂດຍສັນຕິ ແລະສົງຄາມຈິດຕະສາດຂອງພວກຈັກກະພັດແລະພວກປະຕິການສາກົນ....

ຂ/– ອອກແຮງຟື້ນຟູແລະຂະຫຍາຍເສດຖະກິດ, ຂະຫຍາຍການຜະລິດ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບັນດາຊົນຊາດໄດ້ເປັນປົກກະຕິ, ຂະຫຍາຍວັດທະນະທຳ, ສຶກສາ, ສາທາລະນະສຸກ; ບົນພື້ນຖານນັ້ນເຮັດໃຫ້ສະພາບການ ການເມືອງເປັນປົກກະຕິ, ສ້າງພື້ນຖານທີ່ອຳນວຍຄວາມສະດວກໃຫ້ແກ່ການດັດສ້າງ ແລະ ກໍ່ສ້າງສັງຄົມນິຍົມ.

ຄ/– ອອກແຮງເຮັດທຸກວຽກງານອັນຈຳເປັນທີ່ສາມາດຈະເຮັດໄດ້ເພື່ອກະກຽມໃຫ້ແຜນການ ໕ ປີເທື່ອທີ ໑ ຂອງລັດ (໑໙໘໑–໑໙໘໕).

ເພື່ອປະຕິບັດ ໓ ຫນ້າທີ່ດັ່ງກ່າວນັ້ນ ໃຫ້ສຳເລັດຜົນຢ່າງມີໄຊ, ພວກເຮົາຕ້ອງ:

– ສືບຕໍ່ເຊື່ອມຊຶມແນວທາງປະຕິວັດສັງຄົມນິຍົມແລະ

ແນວທາງກໍ່ສ້າງພື້ນຖານເສດຖະກິດສັງຄົມນິຍົມຂອງພັກວາງອອກ; ຮັບຮູ້ຢ່າງເລິກເຊິ່ງກ່ຽວກັບຈຸດພິເສດຂອງສະໄໝຂ້າມຜ່ານຢູ່ປະເທດເຮົາ; ເຊື່ອມຊຶມໃຫ້ເລິກເຊິ່ງກ່ວາເກົ່າກ່ຽວກັບບັນດາທັດສະນະໃຫຍ່ຂອງພັກ, ກ່ຽວກັບການກໍ່ສ້າງເສດຖະກິດ, ປົກປັກຮັກສາປະເທດຊາດ, ກ່ຽວກັບການກໍ່ສ້າງພັກ ກໍ່ສ້າງອຳນາດການປົກຄອງ ແລະບັນດາອົງການຈັດຕັ້ງມະຫາຊົນ; ກ່ຽວກັບຄວາມສາມັກຄີສາກົນ.

– ປຸກລະດົມຂະບວນການປະຕິວັດ ຂອງມະຫາຊົນຢ່າງຟົດຟື້ນ ແລະຕໍ່ເນື່ອງກັນ, ເສີມຂະຫຍາຍບົດບາດເປັນເຈົ້າລວມໝູ່ຂອງມະຫາຊົນ, ເຮັດໃຫ້ປວງຊົນມີຄວາມຕື່ນຕົວສູງກ່ວາເກົ່າ ເພື່ອເປັນເຈົ້າການປະຕິບັດແນວທາງ, ແຜນນະໂຍບາຍຂອງພັກແລະກົດໝາຍຂອງລັດ.

– ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ພາຍໃນບັນດາກຳລັງປະຕິວັດ; ອອກແຮງສູ້ຊົນຜ່ານຜ່າຂໍ້ບົກຜ່ອງແລະຈຸດອ່ອນຕ່າງໆ ໃນການຄຸ້ມຄອງເສດຖະກິດ, ຄຸ້ມຄອງລັດ ແລະຄຸ້ມຄອງສັງຄົມ. ທຸກຂໍ້ຫຍຸ້ງຍາກ, ກຳຈັດດັດແກ້.

– ເພີ່ມທະວີຄວາມສາມັກຄີແບບພິເສດ ກັບຫວຽດນາມ ແລະກຳປູເຈຍ, ສາມັກຄີກັບສະຫະພາບໂຊວຽດ

ແລະບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ, ນາດແບ່ງຄວາມເປັນໃຈສະໜັບສະໜູນຢ່າງກ້ວາງຂວາງ ຈາກບັນດາກຳລັງປະຕິວັດ ແລະກ້າວໜ້າໃນໂລກ.

ງ/– ພາລະກຳປະຫວັດສາດຂອງພັກເຮົາສະຫງ່າງາມທີ່ສຸດ, ແຕ່ໜ້າທີ່ຮັບຜິດຊອບກໍໜັກໜ່ວງທີ່ສຸດ; ພັກເຮົາ ບໍ່ສະເພາະແຕ່ຮັບຜິດຊອບຕໍ່ຊົນຊັ້ນກຳມະກອນ ແລະປະຊາຊົນຜູ້ອອກແຮງງານໃນລາວ ແລະ ຕໍ່ຊາດເຮົາເທົ່ານັ້ນ, ຫາກຍັງຮັບຜິດຊອບຕໍ່ຂະບວນການປະຕິວັດໂລກອີກດ້ວຍ.

ເພື່ອເຮັດຫລ້ອນພາລະກຳປະຫວັດສາດດັ່ງກ່າວ, ພັກເຮົາຕ້ອງບົກສູງຄວາມສາມາດ ແລະ ຄຸນນະພາບໃນທຸກດ້ານຢ່າງບໍ່ປຸດຢັ້ງ ເພື່ອໃຫ້ທຽບທັນກັບລະດັບຂອງໜ້າທີ່ການເມືອງໃນໄລຍະໃໝ່.

ຮັກສາໃຫ້ແໜ້ນ ແລະ ຮັກສາມູນເຊື້ອສາມັກຄີເປັນເອກະພາບ, ຕິດພັນຢ່າງສະໜິດແໜ້ນ ກັບມະຫາຊົນໃຫ້ສົມກຽດເປັນຜູ້ນຳພາ ທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈ, ເປັນຄົນໃຊ້ຜູ້ຈິງຮັກພັກດີຂອງປະຊາຊົນຢ່າງແທ້ຈິງ.

ຕ້ອງເຮັດໃຫ້ພັກຂອງພວກເຮົາຜ່ອງໃສ ແລະ ໜັ້ນຄົງເຂັ້ມແຂງຢ່າງແທ້ຈິງ, ເປັນພັກທີ່ມີສະຕິປັນຍາ, ມີ

ຄວາມສາມາດ, ມີຄຸນສົມບັດອັນດີງາມກວ່າໝູ່.

ພະນັກງານສະມາຊິກພັກທຸກຄົນ ບໍ່ສະເພາະແຕ່ຕ້ອງຮັກສາໃຫ້ແໜ້ນຄຸນສົມບັດອັນດີງາມຂອງພັກຄື:

ນ້ຳໃຈຈົງຮັກພັກດີ, ນ້ຳໃຈຍອມເສຍສະລະອົງອາດກ້າຫານ, ມີສະຕິສາມັກຄີພາຍໃນ, ສາມັກຄີລະຫວ່າງຊາດ, ສາມັກຄີກັບເທົ່ານັ້ນ, ຫາກຍັງຕ້ອງເຊື່ອມຊຶມ ພາລະກຳປະຫວັດສາດຂອງພັກໃຫ້ເລິກເຊິ່ງກວ່າເກົ່າ ແລະ ອອກແຮງຂະຫຍາຍໃຫ້ນັບມື້ນັບສູງຂຶ້ນ ສ້າງເປັນກຳລັງແຮງໃໝ່ ບຸກໜ້າບືນຕົວຂຶ້ນສູ່ບອດສູງ ຂອງລະດັບຄວາມຮູ້ທັງດ້ານທິດສະດີ, ການເມືອງ, ວັດທະນະທຳ, ວິທະຍາສາດເຕັກນິກ ແລະ ຄວາມສາມາດ ໃນການຈັດຕັ້ງປະຕິບັດ ບັນດາໜ້າທີ່ຂອງພັກ ແລະ ລັດໃນການກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດສັງຄົມນິຍົມ ໃຫ້ປະກົດຜົນເປັນຈິງ.

*

*    *

ໃນໂອກາດ ສະເຫລີມສະຫລອງ ວັນສ້າງຕັ້ງພັກ ຄົບຮອບ ໒໕ ປີ, ພວກເຮົາມາທວນຄືນມູນເຊື້ອ ແຫ່ງການຕໍ່ສູ້ປະຕິວັດອັນເຕັມໄປດ້ວຍຄວາມຫຍຸ້ງຍາກລຳບາກ ແຕ່

ສະຫງ່າອົງອາດທີ່ສຸດ; ຫວນຄືນບັນດາໄຊຊະນະອັນຍິ່ງໃຫຍ່ທີ່ຜ່ານມາ ພວກເຮົາທຸກຄົນມີຄວາມທະນົງໃຈທີ່ສຸດຕໍ່ປະຊາຊົນລາວວີລະຊົນ, ຕໍ່ພັກປະຊາຊົນປະຕິວັດລາວທີ່ສະຫງ່າລາສີ.

ດ້ວຍຄວາມເຊື່ອໝັ້ນ ແລະ ພາກພູມໃຈ, ພວກເຮົາເດັດດ່ຽວເຊີດຊູນ້ຳໃຈປະຕິວັດ ໃຫ້ສູງຂຶ້ນຕື່ມອີກກ້າວໜຶ່ງ, ອອກແຮງສູ້ຊົນສຸດຄວາມສາມາດຂອງຕົນ ເພື່ອເພີ່ມທະວີກຳລັງແຮງຂອງພັກ, ນຳພາປະຊາຊົນປະຕິບັດໜ້າທີ່ໃນການກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ ສັງຄົມນິຍົມຢ່າງມີໄຊ. ພາຊາດລາວກ້າວຂຶ້ນ ຕາມເສັ້ນທາງອັນສະຫວ່າງສະໄຫວປະກອບສ່ວນຢ່າງສົມກຽດ ເຂົ້າໃນພາລະກິດປະຕິວັດຂອງໂລກ.

– ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໝັ້ນຍືນ!

– ລັດທິມາກ – ເລນິນທີ່ຊະນະເລີດໝັ້ນຍືນ!

– ພາລະກິດປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດສັງຄົມນິຍົມຂອງປະຊາຊົນເຮົາ ເດັດຂາດມີໄຊ!